**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--໙໙ ໑໑--

ນະຄອນຫຼວງວຽງຈັນ

ຄະນະບໍລິຫານງານພັກ

ເລກທີ: 1087 /ຄພ.ນວ

ລົງວັນທີ: 13 ມິຖຸນາ 2016.

# ມະຕິຕົກລົງ

## ກອງປະຊຸມຄົບຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ຄັ້ງທີ 4 ສະໄໝທີ VI (ວັນທີ 09-10 ພຶດສະພາ 2016)

ກອງປະຊຸມຄົບຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ຄັ້ງທີ 4 ສະໄໝທີ VI ໄດ້ໄຂຂຶ້ນໃນວັນທີ 09-10 ພຶດສະພາ 2016 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ຊັ້ນ I, ພາຍໃຕ້ການເປັນປະທານຂອງ **ສະຫາຍ ປອ. ສິນລະວົງ ຄຸດໄພທູນ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະພັກ, ເຈົ້າຄອງນະຄອນຫຼວງວຽງຈັນ**, ມີບັນດາ ຄະນະປະຈຳພັກ, ກຳມະການພັກ ນະຄອນຫຼວງວຽງຈັນ ເຂົ້າຮ່ວມທັງໝົດ 32 ສະຫາຍ, ຍິງ 03 ສະຫາຍ. ກອງປະຊຸມໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ພິຈາລະນາບາງບັນຫາດັ່ງນີ້:

**I.** <u>ພິຈາລະນາຮັບຮອງເອົາ ແຜນການກະກຽມເນື້ອໃນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ລາຍງານໂດຍ: ຫ້ອງວ່າການສະພາປະຊາຊົນ, ຫ້ອງວ່າການນະຄອນຫຼວງວຽງຈັນ, ພະແນກການເງິນ ແລະ ພະແນກແຜນການ-ການລົງທຶນ ນະຄອນຫຼວງວຽງຈັນ.</u>

1. ກ່ຽວກັບວິໄສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ( 2016-2020 ) ຂອງນະຄອນຫຼວງວຽງຈັນ.

1.1. <u>ບົດຂອງສະຫາຍເຈົ້າຄອງນະຄອນຫຼວງວຽງຈັນ ລາຍງານກ່ຽວກັບວິໄສທັດ 2030 ແລະ ຍຸດທະສາດການພັດທະນາຮອດປີ2025</u>: ໃຫ້ເວົ້າເຖິງບັນຫາກວມລວມ, ໂດຍປະກອບມີ 3 ພາກ ຄື:

- <u>ພາກທີ 1</u> : ສະແດງໃຫ້ເຫັນສະຖານະຂອງນະຄອນຫຼວງວຽງຈັນ ໃນໄລຍະຜ່ານມາເຖິງປະຈຸບັນ ໂດຍທຽບໃສ່ໜຶ່ງໃນ 10 ນະຄອນຫຼວງຂອງອາຊຽນ ເພື່ອໃຫ້ຊາວນະຄອນຫຼວງ ກໍ່ຄືປະຊາຊົນລາວທຸກຊັ້ນຄົນໄດ້ຮັບຮູ້ ແລະ ເຂົ້າໃຈເຖິງການເຕີບໃຫຍ່ ແລະ ຂະຫຍາຍຕົວທາງດ້ານເສດຖະກິດຂອງນະຄອນຫຼວງວຽງຈັນ. ນອກນັ້ນ, ໃຫ້ເອົາບົດໂອ້ລົມຂອງທ່ານປະທານປະເທດ ຕໍ່ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ, ໜ້າທີ່ພື້ນຖານຂອງນະຄອນຫຼວງໃຫ້ກາຍເປັນມະຕິຂອງກົມການເມືອງ ແລະ ກົດໝາຍຂອງນະຄອນຫຼວງ.
- <u>ພາກທີ 2</u> : ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາຮອດປີ 2025 ໃນການພັດທະນາ ນະຄອນຫຼວງ.

\+ <u>ບ່ອນອີງ</u>:

- ອີງໃສ່ຖານະ ແລະ ທີ່ຕັ້ງຂອງນະຄອນຫຼວງ.
- ອີງໃສ່ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ວ່າດ້ວຍການພັດທະນາທ້ອງຖິ່ນ ແລະ ຮາກຖານ.
- ອີງໃສ່ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ.
- ອີງຕາມທິດທາງ, ໜ້າທີ່ຂອງຄະນະລັດຖະບານ ຊຸດທີ VIII ແລະ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ທີ່ເປັນບາດລ້ຽວໃໝ່ ຂອງການບໍລິຫານອົງການປົກຄອງທ້ອງຖິ່ນ.

ໃນນັ້ນ, ນະຄອນຫຼວງ ໄດ້ກໍານົດວິໄສທັດ, ຍຸດທະສາດ ແລະ ຄາດໝາຍໃຫຍ່ໃນການພັດທະນານະຄອນຫຼວງ ໄລຍະ 15 ປີຕໍ່ໜ້າ ວິໄສທັດ ມີດັ່ງນີ້: <u>ວິໄສທັດຮອດປີ 2030</u> ໃຫ້ຂັດຈ້ອນເຂົ້າເປັນຂອງລັດ ແລະ ເປັນນິຕິກໍາ, ແຕ່ບໍ່ໃຫ້ສະແດງອອກທາງດ້ານການເມືອງ ແລະ ໃຫ້ອະທິບາຍແຕ່ລະວິໄສທັດໂດຍຫຍໍ້; <u>ຍຸດທະສາດການພັດທະນາຮອດປີ 2025</u>: ໃຫ້ບັນຍາຍລະອຽດ ໂດຍປະຕິບັດຕາມວິໄສທັດຂ້າງເທິງ ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ ໄດ້ກໍານົດເອົາ 6 ຍຸດທະສາດ ເພື່ອຮັບໃຊ້ວິໄສທັດ ໂດຍນະຄອນຫຼວງຈະເນັ້ນໜັກໃສ່ 2 ຍຸດທະສາດຄື:

① ແມ່ນການຜ່ານພົ້ນອອກຈາກສະຖານະພາບຂອງນະຄອນດ້ອຍພັດທະນາ, ນະຄອນຫຼວງຍັງດ້ອຍພັດທະນາທາງດ້ານພື້ນຖານໂຄງລ່າງ ເຊິ່ງສະແດງອອກເຖິງການເປັນຊະລໍາ, ລວມເຖິງການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທີ່ບໍ່ມີປະສິດທິຜົນ.

② ຍຸດທະສາດການບໍລິຫານເມືອງຫຼວງ ໃຫ້ມີຄວາມໝັ້ນຄົງ ແລະ ຄວາມສະຫງົບປອດໄພຮອບດ້ານ.

- ແຕ່ນີ້ຫາປີ 2020 ນະຄອນຫຼວງວຽງຈັນເລັ່ງໃສ່ແກ້ໄຂ 6 ບັນຫາໃຫຍ່ທີ່ອັດຕັນການພັດທະນານະຄອນຫຼວງ ຊຶ່ງຈະຕ້ອງສ້າງເປັນ 6 ໂຄງການໃຫຍ່ ແລະ ກິດຈະການ ໃນນັ້ນ ໃຫ້ມີການແກ້ໄຂໜີ້ສິນຂອງນະຄອນຫຼວງ. ສໍາລັບຄາດໝາຍໃຫຍ່ 18 ຄາດໝາຍ 5 ປີຕໍ່ໜ້າ ໃຫ້ອະທິບາຍໂດຍຫຍໍ້ຫຼື ໃຫ້ພະແນກແຜນການ ແລະ ການລົງທຶນ ເປັນຜູ້ລາຍງານເລີຍ.

- <u>ພາກທີ 3</u> : ມາດຕະການຈັດຕັ້ງປະຕິບັດວິໄສທັດ ແລະ ຍຸດສະສາດ ມີ 4 ມາດຕະການ ຄື:

+ <u>ມາດຕະການ 1</u> : ຫັນວິໄສທັດ ແລະ ຍຸດທະສາດເຂົ້າໃນແຜນ 5 ປີ ຊຶ່ງຈະຜ່ານຄັ້ງທີ 8,9,10,11 ຈຶ່ງຈະບັນລຸວິໄສທັດໄດ້ ພ້ອມດຽວກັນນັ້ນກໍ່ສ້າງເປັນແຜນແຕ່ລະປີ ເພື່ອນໍາຜ່ານສະພານະຄອນຫຼວງ ສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາ ຕາມລະບຽບການ.

+ <u>ມາດຕະການທີ 2</u> : ມີແຜນງົບປະມານຮັບຮອງ ເພື່ອຈັດຕັ້ງປະຕິບັດແຕ່ລະແຜນງານ ແລະ ໂຄງການ ໃນໄລຍະ 15 ປີ ເພື່ອໃຫ້ນະຄອນຫຼວງມີກອງທຶນໃນການພັດທະນາ; ໃນນັ້ນໄດ້ຈາກການລົງທຶນຂອງລັດ, ຂອງທະນາຄານ, ຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ ໂດຍປະຕິບັດນະໂຍບາຍຂອງສູນກາງພັກ ແລະ ລັດຖະບານ ໃນແຕ່ລະການລະດົມແຫຼ່ງທຶນ ຄື: ① ການລົງທຶນຂອງລັດ ຕ້ອງປະຕິບັດຢ່າງເຂັ້ງຂັດ ຕາມລະບຽບກົດໝາຍ ວ່າດ້ວຍການລົງທຶນຂອງລັດ ແລະ ກົດໝາຍກ່ຽວຂ້ອງຢ່າງເຂັ້ມງວດ. ② ການລົງທຶນຂອງທະນາຄານ ແມ່ນສົ່ງເສີມ ແລະ ຍັ້ງຢືນເຂົ້າສູ່ໃນການຜະລິດສິນຄ້າ ໂດຍນໍາໃຊ້ເສດຖະກິດຕະຫຼາດ ( ກົນໄກຕະຫຼາດ ) ແລະ ປະຕິບັດກົດໝາຍຂອງທະນາຄານແຫ່ງລັດ. ③ ການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຕ້ອງມີກົນໄກ ແລະ ມາດຕະການການສົ່ງເສີມການລົງທຶນ ໂດຍສ້າງໂຄງການຮຽກການລົງທຶນ, ໂດຍປະຕິບັດຕາມກົດໝາຍສົ່ງເສີມການລົງທຶນ ແລະ ພ້ອມດຽວກັນນັ້ນກໍ່ໃຫ້ປັບປຸງ ການວາງມາດຕະການການລົງທຶນທີ່ບໍ່ຄ່ອງຕົວ. ໂຄງການລົງທຶນຂອງຕ່າງປະເທດຕ້ອງມີມູນຄ່າ 5-10 ລ້ານໂດລາຂຶ້ນໄປ, ການລົງທຶນຂອງປະຊາຊົນ ( ເສດ ຖະກິດຄອບຄົວ ) ນະຄອນຫຼວງແມ່ນສົ່ງເສີມການລົງທຶນຂະໜາດນ້ອຍ ແລະ ກາງ ເປັນຕົ້ນການລົງທຶນຂອງຄອບຄົວເປີດກວ້າງແມ່ນສົ່ງເສີມໃຫ້ມີໂອດ່ອບ ( ODOP ) ໂອທ່ອບ ( OTOP ) ຕ້ອງສົ່ງເສີມໃຫ້ໄດ້ລະດັບມາດຕະຖານ, ໄປໃນລວງດຽວກັນ ແລະ ພື້ນທີ່ດຽວກັນ.

+ <u>ມາດຕະການທີ 3</u> : ກົນໄກໃນການຈັດຕັ້ງປະຕິບັດ: ແມ່ນປະຕິບັດຕາມກົນໄກປະຕູດຽວ, ມອບຄວາມຮັບຜິດຊອບຂາດຕົວ ຕາມລະບຽບກົດໝາຍທີ່ໄດ້ກໍານົດໄວ້ ເລັ່ງໃສ່ຫົວໜ້າພະແນກການບໍລິການ ແລະ ຄຸ້ມຄອງໃນຂະແໜງການຕົນເອງເປັນຫຼັກ, ຫົວໜ່ວຍວິສາຫະກິດ ແລະທຸລະກິດ ເປັນກົນໄກເປັນຫົວໜ່ວຍຜະລິດທຸລະກິດ ແລະ ການບໍລິການ ຕາມຄໍາຂັວນ 5 ດີ.

+ <u>ມາດຕະການທີ 4</u> : ການກວດກາການປະຕິບັດແຜນຕັ້ງແຕ່ຫົວທີ, ສົ່ງເສີມຍ້ອງຍໍຜູ້ທີ່ມີຜົນງານ, ຜູ້ທີ່ປະກອບພັນທະໃຫ້ລັດ ແລະ ໃສ່ວິໄນບໍ່ໃຫ້ຄວາມກ້າວໜ້າຕໍ່ຜູ້ທີ່ເມີນເສີຍ.

- ມອບໃຫ້ ສະຫາຍ ອຸດອນ ໄຊມີນຕີ ຄະນະປະຈໍາພັກ, ຫົວໜ້າຄະນະໂຄສະນາອົບຮົມ ນະຄອນຫຼວງວຽງຈັນ ປັບປຸງບົດດັ່ງກ່າວໃຫ້ສົມບູນຍິ່ງຂຶ້ນ.

1.2 <u>ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ນະຄອນຫຼວງວຽງຈັນ.</u> ໃຫ້ມີຄວາມສອດຄ່ອງກັບບົດລາຍງານຂອງວິໄສທັດ ແລະ ຍຸທະສາດ, ໃຫ້ສັງລວມພາກສະເໜີ, ວິໄສທັດ ແລະ ຍຸດທະສາດລົງຕື່ມ.

1.3 ບົດບົດລາຍງານຂອງພະແນກການເງິນ ກ່ຽວກັບແຜນງົບປະມານ 5 ປີ ຄັ້ງທີ VIII (2016-2025) ນະຄອນຫຼວງວຽງຈັນ. ໃຫ້ປັບປຸງຫຼາຍຈຸດ, ເຮັດໃຫ້ຄົນເຊື່ອໝັ້ນ ແລະ ເຮັດໃຫ້ເຫັນທົ່ວໜ່ວຍແຫຼ່ງລາຍຮັບຂອງນະຄອນຫຼວງ ຈາກຫຼາຍຂະແໜງການ ເຊັ່ນ: ອຸດສະຫະກຳ, ກະສິກຳ ແລະ ການບໍລິການ ພາຍໃນ 1 ປີ ສາມາດຜະລິດໄດ້ເທົ່າໃດ ແລະ ຕໍ່ໜ້າຈະໄດ້ເທົ່າໃດ, ດ້ານລາຍຮັບ-ລາຍຈ່າຍໃນ 5 ປີຕໍ່ໜ້າ.

- ເນື້ອໃນຂອງບົດລາຍງານ ຕ້ອງສະແດງໃຫ້ເຫັນສະຖານະພາບ ແລະ ສິ່ງທ້າທາຍດ້ານການເງິນຂອງນະຄອນຫຼວງ ເຊັ່ນ: ຄວາມຄ່ອງຕົວດ້ານການເງິນ ແລະ ໜີ້ສິນ. ນອກນັ້ນ ກໍແມ່ນການພັດທະນານະຄອນຫຼວງ ຕ້ອງເອົາການເງິນເປັນໃຈກາງຂອງການພັດທະນາ, ສະນັ້ນ ໃຫ້ລະບຸລະອຽດ ດ້ານວິໄສທັດ, ຍຸດທະສາດ ແລະ ຄາດໝາຍໃຫຍ່ທາງດ້ານການເງິນນະຄອນຫຼວງ.

- ສຳລັບມາດຕະການດ້ານການເງິນແມ່ນ ການປຸກລະດົມ ແລະ ການຂຸດຄົ້ນລາຍຮັບໃໝ່ ໃນນັ້ນໃຫ້ກຳນົດຖານລາຍຮັບທີ່ ນະຄອນຫຼວງວຽງຈັນມີ ແລະ ສະເໜີຕື່ມທ່າແຮງບົ່ມຊ້ອນ ຂອງນະຄອນຫຼວງ ຈາກການຫັນຊັບສິນເປັນທຶນ, ອະສັງຫາລິມະຊັບ ແລະ ການບໍລິການ.

**2/. ພິຈາລະນາຮ່າງຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍກອງທຶນທາງ ນະຄອນຫຼວງວຽງຈັນ**: ລາຍງານໂດຍພະແນກການເງິນ ນະຄອນຫຼວງວຽງຈັນ.

ກອງປະຊຸມເປັນເອກະພາບກັນດັ່ງນີ້:

2.1. ກອງປະຊຸມຄະນະບໍລິຫານງານພັກນະຄອນຫຼວງວຽງຈັນ ຕົກລົງເຫັນດີໃຫ້ສ້າງຕັ້ງກອງທຶນທາງນະຄອນຫຼວງວຽງຈັນ ຕາມນະໂຍບາຍກອງທຶນທາງຂອງລັດຖະບານ ຕາມມາດຕາ 3 ແລະ ມາດຕາ 4 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 15 ມັງກອນ 2001.

2.2. ໃຫ້ປັບປຸງຮ່າງຂໍ້ຕົກລົງເປັນ 2 ຮ່າງ ຄື: ① ເປັນຮ່າງຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ② ຮ່າງຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ແຕ່ຂອງນາຍົກລັດຖະມົນຕີໃຫ້ເຮັດເປັນ 2 ແບບຄື:

ແບບທີ 1: ແມ່ນຕາມແບບຂອງເຈົ້າຄອງນະຄອນຫຼວງວຽງຈັນ

ແບບທີ 2: ແມ່ນດຳນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງເອົາຂໍ້ສະເໜີຂອງເຈົ້າຄອງນະຄອນຫຼວງວຽງຈັນ ກ່ຽວກັບການສ້າງກອງທຶນທາງຢູ່ນະຄອນຫຼວງວຽງຈັນ ຕາມມາດຕາ 4 ຂອງດຳລັດນາຍົກລັດຖະມົນຕີ ວ່າດ້ວຍກອງທຶນບູລະນະຮັກສາທາງຫຼວງ ສະບັບເລກທີ 09/ນຍ, ລົງວັນທີ 15/1/2001.

- ໃຫ້ເບິ່ງກົດໝາຍ ວ່າດ້ວຍ ທາງຫຼວງ ສະບັບເລກທີ 04/99/ສພຊ, ລົງວັນທີ 03/04/1999 ກ່ຽວກັບການກວດ ກາເຕັກນິກລົດໃຫ້ເກັບຄ່າບໍລິການ.

2.3. ເຫັນດີ ໃຫ້ນຳເຂົ້າຜ່ານກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ເພື່ອຂໍຄຳເຫັນຈາກສະມາຊິກສະພາ, ເພື່ອນຳໄປທາບທາມຈາກກະຊວງ, ອົງການ, ປະຊາຊົນໃນນະຄອນຫຼວງວຽງຈັນ.

2.4. ໃຫ້ແຕ່ງຕັ້ງຄະນະບັນນາທິການ ປະກອບມີບັນດານັກກົດໝາຍ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເຂົ້າຮ່ວມໃນຄະນະແຕ່ບໍ່ໃຫ້ເກີນຫ້າຄົນ.

2.5. ສຳລັບຮ່າງນິຕິກຳໃຫ້ປັບປຸງ ດັ່ງນີ້:

2.5.1. ບ່ອນອີງ

ໜຶ່ງ: ອີງໃສ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ມາດຕາ 16 ວ່າດ້ວຍສະພາບເຕັກນິກລົດ ແລະ ພາຫະນະທຸກປະເພດທີ່ນຳໃຊ້ຕ້ອງໄດ້ເຂົ້າກວດກາເຕັກນິກປະຈຳປີ.

ສອງ: ອີງໃສ່ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການເກັບຄ່າບໍລິການ ແລະ ດຳລັດວ່າດ້ວຍການສ້າງກອງທຶນທາງ.

ສາມ: ອີງໃສ່ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ.

ສີ່: ອີງໃສ່ມະຕິລົງຂອງກອງປະຊຸມຄົບຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ຄັ້ງທີ IV, ຄັ້ງວັນທີ 9-10 ພຶດສະພາ 2016.

ຫ້າ: ອີງໃສ່ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ.... ລົງວັນທີ.......

2.5.2. ເນື້ອໃນນິຕິກຳໃຫ້ປັບປຸງ:

- ໃຫ້ຮັກສາມາດຕາ 01: ນະຄອນຫຼວງວຽງຈັນ ເຫັນດີປະກາດສ້າງຕັ້ງກອງທຶນທາງນະຄອນຫຼວງວຽງຈັນຕາມ ມາດຕາ 4 ຂອງດຳລັດນາຍົກລັດຖະມົນຕີ ວ່າດ້ວຍກອງທຶນບຸລະນະຮັກສາທາງຫຼວງ ສະບັບເລກທີ 09/ນຍ, ລົງວັນທີ 15/1/2001.

- ມາດຕາ 02 : ໃຫ້ກ່າວເຖິງນິຍາມ ຫຼື ຈຸດປະສົງຄາດໝາຍ ໃຫ້ເຈາະຈົງບັນຫາທີ່ຕ້ອງການ.

- ມາດຕາ 05 : ແມ່ນກຳນົດແຫຼ່ງລາຍຮັບຂອງກອງທຶນທາງ.

- ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາຄືນກ່ຽວກັບແຫຼ່ງລາຍຮັບ ໂດຍອີງໃສ່ ເພື່ອຕອບສະໜອງ 3 ຈຸດປະສົງຄື:

+ ອີງຕາມຄວາມຮຽກຮ້ອງຕ້ອງການເພື່ອຊຳລະໜີ້ສິນ, ເພື່ອບົວລະບະຮັກສາເສັ້ນທາງໃຫ້ຍືນຍົງ ແລະ ເພື່ອເປັນກອງທຶນໃນການແກ້ໄຂ ແລະ ພັດທະນາຖະໜົນຫົນທາງໃນນະຄອນຫຼວງ.

+ ອີງໃສ່ລະດັບການກະທົບໃສ່ຖະໜົນຫົນທາງ ເພື່ອໃຫ້ເຂົ້າກັບເຕັກນິກ ໝາຍວ່າລົດໄດ້ກະທົບໃສ່ທາງ

+ ເພື່ອດັດສົມຄວາມຮັ່ງມີຜາສຸກ ໂດຍເອົາຈາກຜູ້ຮັ່ງມີມາຊ່ວຍສາທາລະນະ ຄື: ເກັບຄ່າບໍລິການກວດກາເຕັກນິກລົດທີ່ມີລາຄາແພງໃຫ້ສູງຂຶ້ນ, ສ່ວນລົດໂດຍສານສາທາລະນະໃຫ້ຫຼຸດລາຄາລົງ ເພື່ອເປັນການສົ່ງເສີມນະໂຍບາຍ ທັງເປັນການດັດສົມການນຳໃຊ້ພາຫະນະ ແລະ ໃຫ້ຄົນມີຄວາມເພິ່ງພໍໃຈ,

- ແຫຼ່ງລາຍຮັບຂອງກອງທຶນທາງ : ໃຫ້ເອົາຈາກແຫຼ່ງດຽວ ເພື່ອບໍ່ໃຫ້ເກີດຄວາມຊັບຊ້ອນ.

- ສຳລັບກົນໄກ ການຈັດຕັ້ງປະຕິບັດແມ່ນ ບໍ່ຈຳເປັນມີສະພາບໍລິຫານກອງທຶນທາງ, ໃຫ້ຄະນະບໍລິຫານກອງທຶນເປັນຜູ້ບໍລິຫານ ແລະ ຈັດການກອງທຶນເລີຍ ເພື່ອບໍ່ໃຫ້ມີການແຕ່ງຕັ້ງຫຼາຍຄະນະເກີນໄປ.

2.6. ສຳລັບບົດລາຍງານທີ່ຈະລາຍງານຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນນະຄອນຫຼວງ ຊຸດທີ I ຕ້ອງຂຽນໃຫ້ຖືກກັບໂຄງຮ່າງການສະເໜີນິຕິກຳ ແລະ ອະທິບາຍໃຫ້ລະອຽດຈະແຈ້ງ.

2.7. ໃຫ້ແຕ່ງຕັ້ງຄະນະບັນນາທິການ ແລະ ປ້ອງກັນຮ່າງນິຕິກຳສະບັບດັ່ງກ່າວ ແລ້ວຂໍອະນຸມັດລາຍເຊັນໄວ.

3/. <u>ພິຈາລະນາຮ່າງຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາແຄມຂອງ:</u> ລາຍງານໂດຍພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ.

ກອງປະຊຸມເປັນເອກະພາບ ດັ່ງນີ້:

3.1. ກອງປະຊຸມຕົກລົງເຫັນດີຮອງຮອງເອົາ ຮ່າງດຳລັດ ວ່າດ້ວຍການຄຸ້ມຄອງເຂດແຄມຂອງ ບໍລິເວນຫາດດອນຈັນ ນະ ຄອນຫຼວງວຽງຈັນ ແຕ່ໃຫ້ປັບປຸງຄືນບາງຈຸດ ດັ່ງນີ້:

3.1.1. ໃຫ້ປັບປຸງ ຮ່າງດຳລັດ ໃຫ້ເປັນຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ.

3.1.2. ມາດຕາ 19 ໃຫ້ເພີ່ມ ຫ້າມເຮັດຕະຫຼາດ ແລະ ຫ້າມຂາຍເຄື່ອງຢູ່ບໍລິເວນທາງຍ່າງ.

4/. <u>ທິດຊີ້ນຳກ່ຽວກັບຮ່າງສັນຍາການສຳປະທານດອນຈັນຂອງບໍລິສັດໄຄລາວ.</u>

ກອງປະຊຸມເປັນເອກະພາບກັນ ດັ່ງນີ້: ໃຫ້ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄປເຈລະຈາກັບບໍລິສັດໄຄລາວ ກ່ຽວກັບເນື້ອໃນການສຳປະທານພື້ນທີ່ຫາດດອນຈັນຄືນໃໝ່ ດັ່ງນີ້:

4.1 ບໍ່ໃຫ້ເຮັດບ່ອນຈອດລົດ ແລະ ຫຼຸດອາຍຸສຳປະທານລົງຈາກ 50 ປີ.

4.2ໃຫ້ຍົກເລີກສັນຍາສຳປະທານ ຖ້າເປັນໄປໄດ້, ເນື່ອງຈາກເປັນນັກລົງທຶນຕ່າງປະເທດ ເພາະພື້ນທີ່ດັ່ງກ່າວເປັນເຂດຊາຍແດນລະຫວ່າງປະເທດ.

4.3ມອບໃຫ້ ສະຫາຍ ແກ້ວພິລາວັນ ອາໄພລາດ ຮອງເລຂາຄະນະພັກ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຊີ້ນຳ-ນຳພາພະແນກແຜນການ ແລະ ການລົງທຶນ ເພື່ອເຈລະຈາກັບບໍລິສັດດັ່ງກ່າວ.

5/. <u>ທິດຊີ້ນຳກ່ຽວກັບ ແຜນຮ່າງການຈັດຕັ້ງປະຕິບັດວຽກງານ ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນໃນ 5 ປີ ຕໍ່ໜ້າ (2016-2020)</u> : ລາຍງານໂດຍກອງເລຂາຂອງຄະນະກຳມະການເລືອກຕັ້ງ ຂັ້ນນະຄອນຫຼວງວຽງຈັນ.

ກອງປະຊຸມເປັນເອກະພາບກັນ ດັ່ງນີ້ :

5.1. ໃຫ້ຄົ້ນຄວ້າບັນດານິຕິກຳ ທີ່ຈະນຳໄປສະເໜີຕໍ່ກອງປະຊຸມ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ໃນໄລຍະ 5 ປີຂ້າງໜ້າ, ໂດຍໃຫ້ເອົາໃຈໃສ່ :

5.1.1. ໃຫ້ອອກນິຕິກຳ ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ວ່າດ້ວຍລະບຽບການສ້າງນິຕິກຳ, ໝາຍວ່າ ໃຫ້ຜັນຂະຫຍາຍກົດໝາຍ ວ່າດ້ວຍການສ້າງນິຕິກຳອອກມາເປັນຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ, ຈຸດປະສົງ: ແມ່ນເພື່ອຮັບໃຊ້ໃຫ້ແກ່ການບໍລິຫານວຽກງານ ໃຫ້ໄປຕາມລະບຽບກົດໝາຍ.

5.1.2.ໃຫ້ຮ່າງແຜນຄາດຄະເນກາງສະໄໝ ແລະ ຮ່າງແຜນວຽກ-ແຜນງານ ໃນແຕ່ລະສະໄໝຂອງກອງປະຊຸມສະພາ.

5.1.3. ຖ້າບໍ່ສາມາດຮ່າງແຜນໄລຍະ 5 ປີໄດ້ ກໍໃຫ້ໄດ້ກາງສະໄໝກ່ອນ ເພື່ອປຶກສາຫາລື ກ່ຽວກັບການສ້າງນິຕິກຳ, ສ່ວນບັນຫາອື່ນໆທີ່ມີແລ້ວ ກໍ່ໃຫ້ສືບຕໍ່ບັນທຶກການຢ່າງຖືກຕ້ອງ ແລະ ສອດຄ່ອງ.

5.1.4. ສຳລັບ ແຜນວຽກທີ່ຈະນຳມາຜ່ານກອງປະຊຸມສະພາປະຊາຊົນ ນະຄອນຫຼວງວຽງຈັນ ຄັ້ງທີ 2 ປະກອບມີ:

+ ຜ່ານແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນປີ 2017.

+ ຜ່ານຮ່າງດຳລັດ ວ່າດ້ວຍກອງທຶນທາງ ຫຼື ຂໍ້ຕົກລົງຂອງເຈົ້າຄອງ ນະຄອນຫຼວງວຽງຈັນ.

+ ຮ່າງດຳລັດ ວ່າດ້ວຍການຄຸ້ມຄອງ ບໍລິເວນທາດຫຼວງ ນະຄອນຫຼວງວຽງຈັນ.

+ ພິຈາລະນາເອົາ 6 ໂຄງການບຸກທະລຸ.

+ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ໂດຍສະເພາະການຈັດສັນບັນດາຕະຫຼາດ ທີ່ມີຄວາມແອອັດ ໃຫ້ເຂົ້າສູ່ລະບຽບ.

5.1.5. ສຳລັບ ແຜນວຽກທີ່ຈະນຳມາຜ່ານກອງປະຊຸມສະພາປະຊາຊົນ ນວ ຄັ້ງທີ 3 ມີ:

+ ຮ່າງກົດໝາຍ ວ່າດ້ວຍນະຄອນຫຼວງ.

+ ຮ່າງກົດໝາຍ ວ່າດ້ວຍອາການຕົວເມືອງ.

+ ການກຳນົດແຜນທີ່-ແຜນຜັງ ແລະ ການຈັດສັນເຂດນຳໃຊ້ທີ່ດິນຕ່າງໆ.

5.1.6. ໃນກອງປະຊຸມສະພາປະຊາຊົນ ນວ ແຕ່ລະຄັ້ງຕ້ອງເອົາ 1 ຫຼື 2 ໂຄງການ ໃນ 6 ໂຄງການບຸກທະລຸເຂົ້າໄປຜ່ານ, ພ້ອມກັນນັ້ນ ກໍ່ໃຫ້ມາກວດກາຄືນກ່ຽວກັບ 18 ຄາດໝາຍຂອງຄະນະພັກ ໃຫ້ຫັນມາເປັນນິຕິກຳທັງໝົດ.

6/. <u>ພິຈາລະນາ ກ່ຽວກັບໂຄງປະກອບການຈັດຕັ້ງ ຂອງອົງການປົກຄອງນະຄອນຫຼວງວຽງຈັນ</u>: ລາຍງານໂດຍຄະນະຈັດຕັ້ງ ນະຄອນຫຼວງວຽງຈັນ.

ກອງປະຊຸມເປັນເອກະພາບກັນ ດັ່ງນີ້:

6.1. ເຫັນດີຮັບຮອງເອົາໂຄງປະກອບກົງຈັກຂອງນະຄອນຫຼວງວຽງຈັນ ທີ່ຄະນະຈັດຕັ້ງນະຄອນຫຼວງວຽງຈັນສະເໜີ, ໂດຍໃຫ້ລຽງເອົາຕາມລັດຖະບານ, ແຕ່ໃຫ້ເອົາຫ້ອງວ່າການນະຄອນຫຼວງວຽງຈັນຂຶ້ນກ່ອນ.

6.2. ເຫັນດີໃຫ້ຍົກເອົາ ອົງການພັດທະນາຕົວເມືອງວຽງຈັນ ເປັນຫ້ອງການທຽບເທົ່າກັບພະແນກການ. ໂດຍມີຊື່ " ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ນະຄອນຫຼວງວຽງຈັນ" ໃຫ້ນຳໃຊ້ກົນໄກບໍລິຫານ ແບບເພິ່ງຕົນເອງ, ສ່ວນໜ້າທີ່ຫຼັກແມ່ນວຽກງານອະນາໄມ-ເກັບມ້ຽນຂີ້ເຫຍື້ອ, ຮັບຜິດຊອບສວນດອກໄມ້, ປະດັບປະດາ ແລະ ໃຫ້ກວດກາຄວາມເປັນລະບຽບຮຽບຮ້ອຍ ໃນຕົວເມືອງ.

6.3. ມອບໃຫ້ ສະຫາຍ ແກ້ວພິລາວັນ ອາໄພລາດ, ຮອງເລຂາຄະນະພັກ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຊີ້ນຳ-ນຳພາ ແລະ ເຮັດວຽກງານແນວຄິດກັບພະນັກງານ ອພບ ໃຫ້ມີແນວຄິດອຸ່ນອ່ຽງໜຸ່ນໜ່ຽງ ໃນການປະຕິບັດໜ້າທີ່ວຽກງານຕໍ່ໄປ.

II. <u>ພິຈາລະນາຮັບຮອງເອົາເນື້ອໃນ, ຮູບແບບ, ຮູບການ, ແບບຟອມ ແລະ ວິທີການໃນການໃຫ້ຄະແນນນັກບໍລິຫານ ຢູ່ນະຄອນຫຼວງວຽງຈັນ</u>, ລາຍງານໂດຍ ຄະນະກວດກາພັກ, ພະແນກກວດກາລັດ, ຄະນະຈັດຕັ້ງ, ພະແນກການພາຍໃນ.

ກອງປະຊຸມໄດ້ເປັນເອກະພາບກັນ ດັ່ງນີ້:

2.1. ເຫັນດີຮັບຮອງເອົາເນື້ອໃນ, ຮູບແບບ, ຮູບການ, ແບບຟອມ ແລະ ວິທີການ ໃນການປະເມີນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກນະຄອນຫຼວງວຽງຈັນ ແລະ ມະຕິກອງປະຊຸມໃຫຍ່ ຂອງອົງຄະນະພັກເມືອງຂອງຕົນ ແລະ ໃຫ້ຖືເປັນຄວາມຮັບຜິດຊອບການເມືອງ.

2.2. ໃຫ້ຈັດການປະເມີນໃນທຸກໆໜຶ່ງປີ.

2.3. ເນື້ອໃນສຳຄັນ ໃນການປະເມີນຜົນໃຫ້ລົງເລິກວຽກງານລວມ ທີ່ເຄີຍຕີລາຄາຜ່ານມາ, ເປັນຕົ້ນ: ການໃຫ້ຄະແນນການນຳພາຢູ່ແຕ່ລະຂັ້ນ, ກ່ອນອື່ນໝົດແມ່ນໃຫ້ປະເມີນຢູ່ຂັ້ນນະຄອນຫຼວງ, ພະແນກການ ແລະ ເມືອງ.

**2.4.** ແບບຟອມການປະເມີນຜົນ ແມ່ນໃຫ້ອີງໃສ່ຄວາມຮັບຜິດຊອບທາງການເມືອງຂອງບຸກຄົນ ທີ່ຮັບຜິດຊອບເປັນຫຼັກ, ຜູ້ທີ່ເຂົ້າຮ່ວມການປະເມີນ ແມ່ນຜູ້ທີ່ໄດ້ມີການຊີ້ນຳ-ນຳພາໂດຍກົງ ຂອງສະຫາຍການນຳຜູ້ນັ້ນ, ພ້ອມກັນນັ້ນ ກໍ່ຕ້ອງມີການຕິລາຄາການຈັດຕັ້ງຂັ້ນເທິງ ແລະ ໜ່ວຍກວດກາຂອງຄະນະກວດກາ ນວ.

**2.5.** ຮູບແບບການປະເມີນ ສ່ອງແສງໃຫ້ເຫັນອັນດີ ແລະ ພົ້ນເດັ່ນ ທີ່ຈະຕ້ອງສົ່ງເສີມໃນປີນັ້ນ ແລະ ເຫັນເຖິງຈຸດອ່ອນຂໍ້ຄົງຄ້າງ, ເປັນຕົ້ນ ແມ່ນການລະເມີດລະບຽບກົດໝາຍ, ການປະຕິບັດໜ້າທີ່ ຕາມທີ່ໄດ້ຮັບມອບໝາຍ.

**2.6.** ມອບໃຫ້ຄະນະກວດກາພັກ, ພະແນກກວດກາລັດ ເປັນໃຈກາງໃນການຮ່າງແບບຟອມ ເພື່ອທາບທາມຢ່າງເປັນເອກະພາບ ທົ່ວຄະນະພັກນະຄອນຫຼວງວຽງຈັນ.

**III.** <u>ຮັບຟັງການລາຍງານ ແລະ ໃຫ້ທິດຊີ້ນຳກ່ຽວກັບ ໂຄງການອານຸສອນສະຖານ ທ່ານ ສີທອງ, ບໍລິສັດ ດວງພະສຸກ ກໍ່ສ້າງ ຈຳກັດ ໄດ້ຮັບອະນຸຍາດໃຫ້ສຳຫຼວດ-ອອກແບບ.</u> ລາຍງານໂດຍ: ພະແນກແຜນການ ແລະ ການລົງທຶນ, ກອງບັນຊາການທະ ຫານ, ເມືອງສັງທອງ, ກອງປະຊຸມໄດ້ຕົກລົງ ເປັນເອກະພາບກັນ ດັ່ງນີ້:

**3.1.** ເຫັນດີຮັບຮອງເອົາຕາມຜົນກອງປະຊຸມ ເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບ ຄະນະປະຈຳພັກນະຄອນຫຼວງວຽງຈັນ ສະໄໝສາມັນປະຈຳເດືອນ 2, ຄັ້ງວັນທີ 10 ກຸມພາ 2015.

**3.2.** ຮັບເອົາຄຳເຫັນຂອງສະພາແຫ່ງຊາດ ແລະ ຂອງທ່ານນາຍົກລັດຖະມົນຕີ ພິຈາລະນາ, ຊຶ່ງໂຄງການດັ່ງກ່າວ ເປັນໂຄງການທີ່ບໍ່ທັນໄດ້ເອົາເຂົ້າແຜນ ຫຼື ເປັນໂຄງການນອກແຜນ, ດັ່ງນັ້ນ ນະຄອນຫຼວງວຽງຈັນ ຈຶ່ງບໍ່ມີເງິນຮ່ວງໃດທີ່ຈະຊຳລະໃຫ້ແກ່ບໍລິສັດ ດວງພະສຸກ ກໍ່ສ້າງຈຳກັດ ຈຳນວນ 5 ຕື້ກີບ, ພ້ອມດຽວກັນນັ້ນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ສົມທົບກັບຂະແໜງປະເມີນຜົນ ຂອງພະແນກກວດກາລັດ ນວ ແລະ ຕົວແທນຂອງສະພາແຫ່ງຊາດ ລົງໄປປະເມີນຜົນການລົງທຶນຕົວຈິງ ວ່າໄດ້ລົງທຶນໃນຈຳນວນເງິນ 5 ຕື້ກີບແທ້ບໍ່.

**3.3.** ໃຫ້ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ລາຍງານຄືນຫາທ່ານນາຍົກລັດຖະມົນຕີ, ຄະນະເລຂາທິການສະພາແຫ່ງຊາດ ແລະ ປະທານສະພາແຫ່ງຊາດ ໃນນາມເຈົ້າຄອງນະຄອນຫຼວງວຽງຈັນ.

**ຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ**

ພັກປະຊາຊົນປະຕິວັດລາວ
ຄະນະພັກນະຄອນຫຼວງວຽງຈັນ

ດຣ.ສິນລະວົງ ຄຸດໄພທູນ